ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ ຢ້ຽມຢາມອວຍພອນຄອບຄົວການນໍາ ເນື່ອງໃນໂອກາດວັນແມ່ຍິງສາກົນ




ໃນວັນທີ 07 ມີນາ 2023 ຜ່ານມາ, ຄະນະສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ (ສມຍ.ທຫລ) ນໍາໂດຍ ທ່ານ ນາງ ວຽງດາລີ ສຸພານຸວົງ ກໍາມະການບໍລິຫານງານ ສມຍ.ທຫລ, ຮອງຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ສະມາຊິກ ຈາກບັນດາຮາກຖານສະຫະພັນແມ່ຍິງ ພ້ອມດ້ວຍຄະນະໄດ້ນໍາເອົາກະຕ່າຫມາກໄມ້, ກະຕ່າຂອງຂວັນ ແລະ ຄໍາອວຍພອນຢ້ຽມຢາມຖາມຂ່າວມາຍັງຄອບຄົວການນໍາ ເພື່ອເປັນການສ້າງຂະບວນການຂໍ່ານັບຮັບຕ້ອນວັນແມ່ຍິງສາກົນ 08 ມີນາ ຊຶ່ງໄດ້ໝູນວຽນມາບັນຈົບ ຄົບຮອບ 113 ປີ (08 ມີນາ 1910 – 08 ມີນາ 2023).








ໃນໂອກາດນີ້ ບັນດາຄອບຄົວທ່ານການນຳໄດ້ກ່າວສະແດງຄວາມຂອບໃຈມາຍັງຄະນະສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ (ສມຍ.ທຫລ) ທີ່ໄດ້ເຫັນຄວາມສຳຄັນຂອງວັນແມ່ຍິງສາກົນ 08 ມີນາ ແລະ ອວຍພອນໄຊອັນປະເສີດແດ່ ແມ່ຍິງທຸກໆທ່ານ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກໃນຊີວິດສ່ວນຕົວ ແລະ ຄອບຄົວ, ປະຕິບັດໜ້າທີ່ຂອງຕົນໃຫ້ມີຜົນສຳເລັດ ປະກອບສ່ວນຢ່າງສຳຄັນເຂົ້າໃນການພັດທະນາອົງກອນ ກໍ່ຄືການສ້າງສາປະເທດຊາດ ໃຫ້ຈະເລີນກ້າວໜ້າຍິ່ງໆຂຶ້ນໄປ.

**# ຂ່າວ-ພາບ: ທະນາຄານແຫ່ງ ສປປ ລາວ.**